ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ

ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ

---== ** ==---

<u>ສໍານັກງານນາຍົກລັດຖະມົນຕີ</u>

ເລກທີ 216 /ນຍ.

ວຽງຈັນ, ວັນທີ 10 / 12 / 2002

# ດໍາລັດ

## ຂອງ ນາຍົກລັດຖະມົນຕີ

## ວ່າດ້ວຍການຮັບຮອງເອົາແຜນຜັງພັດທະນາຕົວເມືອງວຽງຈັນ

***********

- ອີງຕາມກົດໝາຍວ່າດ້ວຍລັດຖະບານ ແຫ່ງ ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ ສະບັບເລກທີ 01/95, ລົງວັນທີ 08 ມີນາ 1995.
- ອີງຕາມກົດໝາຍຜັງເມືອງພາກທີ II ມາດຕາ 10 ວັກ 2 ວ່າດ້ວຍການວາງແຜນຜັງເມືອງລະດັບຕົວເມືອງ.
- ອີງຕາມມະຕິຕົກລົງ ຂອງສະພາລັດຖະມົນຕີ ເລກທີ 18/ປສລ, ລົງວັນທີ 16/03/1991 ວ່າດ້ວຍການຮັບຮອງເອົາແຜນຜັງຊີ້ນໍາລວມ ຂອງເທດສະບານນະຄອນຫລວງວຽງຈັນ.
- ອີງຕາມກົດໝາຍວ່າດ້ວຍທີ່ດິນ.
- ອີງຕາມການສະເໜີ ຂອງທ່ານເຈົ້າຄອງກໍາແພງນະຄອນວຽງຈັນ.

## ນາຍົກລັດຖະມົນຕີ ອອກດໍາລັດ :

<u>ມາດຕາ 1</u> : ຮັບຮອງເອົາແຜນຜັງພັດທະນາຕົວເມືອງວຽງຈັນ ເຊິ່ງມີເນື້ອໃນດັ່ງລຸ່ມນີ້ :

1.1 ຮັບຮອງເອົາເຂດແດນແຜນຜັງພັດທະນາຕົວເມືອງວຽງຈັນ ແຕ່ນີ້ຫາປີ 2010 ທີ່ມີເນື້ອທີ່ທັງໝົດ 20.950 ເຮັກຕາ ກວມເອົາ 189 ບ້ານ.

1.2 ການແບ່ງເຂດນໍາໃຊ້ທີ່ດິນລວມ.

1.3 ການແບ່ງເຂດນໍາໃຊ້ທີ່ດິນສະເພາະ.

1.4 ກໍານົດຈຸດທີ່ຕັ້ງຕົວເມືອງບໍລິວານ.

1.5 ລະບົບໂຄງສ້າງຕາໜ່າງເສັ້ນທາງ.

1.6 ລະບົບລະບາຍນ້ຳອອກຈາກຕົວເມືອງ.

1.7 ລະບົບອ່າງພັກນ້ຳ ແລະ ຫ້ວຍຮ່ອງໜອງບຶງ.

1.8 ທີ່ຕັ້ງກິດຈະການ ບໍລິສັດລະດັບຊາດ,

<u>ມາດຕາ 2</u> : ມອບໃຫ້ກຳແພງນະຄອນວຽງຈັນ ສົມທົບກັບກະຊວງ ຄຂປກ ແລະ ບັນດາພາກສ່ວນທີ່ກ່ຽວຂ້ອງ ສ້າງລະບຽບການຄຸ້ມຄອງນຳໃຊ້ ແລະ ແຜນການລະອຽດ ເພື່ອສືບຕໍ່ສັບຂະຫຍາຍເປັນແຜນຜັງລະອຽດ, ສະເພາະແຕ່ລະເຂດ ແຕ່ລະໂຄງການ ແລະ ອອກຂໍ້ກຳນົດກົດລະບຽບ ຫລື ແຈ້ງການກ່ຽວກັບການຈັດຕັ້ງປະຕິບັດ ແຜນພັດທະນາຕົວເມືອງວຽງຈັນ ໃຫ້ປະກົດຜົນເປັນຈິງ.

<u>ມາດຕາ 3</u> : ທຸກພາກສ່ວນທີ່ກ່ຽວຂ້ອງ ຈົ່ງຮັບຮູ້, ໃຫ້ການຮ່ວມມື ແລະ ພ້ອມກັນຈັດຕັ້ງປະຕິບັດໃຫ້ໄດ້ຮັບຜົນເປັນຢ່າງດີ.

<u>ມາດຕາ 4</u> : ດຳລັດສະບັບນີ້ ມີຜົນສັກສິດນັບແຕ່ມື້ລົງລາຍເຊັນເປັນຕົ້ນໄປ.

ນາຍົກລັດຖະມົນຕີ ແຫ່ງ ສປປລາວ.



ບຸນຍັງ ວໍລະຈິດ